ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 03../ ທຫລ

ກົດລະບຽບ
ບໍລິຫານທຸລະກິດເງິນຕາຕ່າງປະເທດ
ຂອງ ທະນາຄານ ແຫ່ງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ສະບັບດັດແປງເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມດຳລັດ ເລກທີ 53/ປສລ, ລົງວັນທີ 07/09/1990 ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ;
- ອີງຕາມດຳລັດ ເລກທີ 102/ນຍ, ລົງວັນທີ 14/07/2000 ວ່າດ້ວຍການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຂອງລັດ.

ຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ອອກກົດລະບຽບດັ່ງນີ້:

ໝວດທີ I
ຂໍ້ກຳນົດລວມ

ມາດຕາ 1

ກົດລະບຽບສະບັບນີ້ສ້າງຂຶ້ນເພື່ອ ກຳນົດຫຼັກການກ່ຽວກັບການຄຸ້ມຄອງ-ບໍລິຫານຊັບສິນທີ່ເປັນເງິນຕາຕ່າງປະເທດ ຊຶ່ງຢູ່ໃນຄວາມຮັບຜິດຊອບຂອງທະນາຄານແຫ່ງ ສປປ ລາວ.

ມາດຕາ 2

1 ທະນາຄານ ແຫ່ງ ສປປ ລາວ ຄຸ້ມຄອງ-ບໍລິຫານບັນດາແຫຼ່ງທຶນເງິນຕາຕ່າງປະເທດ, ຊຶ່ງປະກອບດ້ວຍ:

ກ. ຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານ ;

ຂ. ຄັ່ງດັດສົມເງິນຕາຕ່າງປະເທດຂະຫຼັດຖະບານ ;

ຄ. ເງິນຝາກເປັນເງິນຕາຕ່າງປະເທດ ຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ ຝາກໄວ້ນຳທະນາ ຄານແຫ່ງ ສປປ ລາວ;

ງ. ທຶນອື່ນໆ.

ມາດຕາ 3

ກົມບໍລິການ ທະນາຄານແຫ່ງ ສປປ ລາວ ຄຸ້ມຄອງ-ບໍລິຫານແຫຼ່ງທຶນເງິນຕາຕ່າງປະເທດ ຕາມ ຫຼັກການຮັບປະກັນຄວາມປອດໄພ, ສາມາດນຳໃຊ້ຢ່າງຄ່ອງຕົວ ແລະມີປະສິດທິພາບໃນການລົງທຶນ.

ມາດຕາ 4

ກົມບໍລິການ ທະນາຄານແຫ່ງ ສປປ ລາວ ຄຸ້ມຄອງ-ບໍລິຫານເງິນຕາຕ່າງປະເທດ ຕາມຮູບການ ດັ່ງລຸ່ມນີ້:

- ຊື້-ຂາຍ ເງິນຕາ ຢູ່ຕະຫຼາດເງິນຕາຕ່າງປະເທດ;
- ລົງທຶນ ດ້ວຍຮູບການ ເງິນຝາກປະເພດຕ່າງໆ, ການຊື້-ຂາຍ ພັນທະບັດສາກົນ, ແລະ ອື່ນໆ.

ມາດຕາ 5

ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ກຳນົດໂຄງປະກອບ ແລະ ອັດຕາສ່ວນຂອງສະກຸນ ເງິນຕາຕ່າງປະເທດແຕ່ລະໄລຍະ ຊຶ່ງປະກອບດ້ວຍ : ເງິນໂດລາ ສະຫະລັດ(USD), ເງິນ ເຢັນ(YEN), ເງິນປອນ ອັງກິດ(GBP), ເງິນເອີໂຣ (Euro), ແລະ ອື່ນໆ.

ໝວດທີ II
ການສ້າງສາຍພົວພັນກັບທະນາຄານຕົວແທນ
ແລະ ການເປີດບັນຊີເງິນຝາກຢູ່ຕ່າງປະເທດ.

ມາດຕາ 6

ເພື່ອຄວາມສະດວກໃນການບໍລິຫານທຸລະກິດເງິນຕາຕ່າງປະເທດ ທະນາຄານ ແຫ່ງ ສປປ ລາວ ສ້າງສາຍພົວພັນກັບ ທະນາຄານ ແລະ ສະຖາບັນການເງິນ ທີ່ເປັນຕົວແທນຢູ່ຕ່າງປະເທດ ດັ່ງ ລຸ່ມນີ້:

ກ. ທະນາຄານກາງຂອງບັນດາປະເທດທີ່ເປັນເຈົ້າຂອງເງິນຕາ, ຊຶ່ງມີຢູ່ໃນໂຄງປະກອບເງິນຕາຕ່າງ ປະເທດຂອງທະນາຄານກາງ ແລະ ບັນດາອົງການຈັດຕັ້ງການເງິນສາກົນຕ່າງໆ;

ຂ. ບັນດາທະນາຄານທຸລະກິດຂອງຕ່າງປະເທດ ທີ່ໄດ້ມາດຕະຖານຈາກການຕີລາຄາຂອງບໍລິ ສັດຈັດ ລະດັບຄວາມໜ້າເຊື່ອຖືທີ່ສາກົນຮັບຮູ້, ໂດຍພາຍໃຕ້ເງື່ອນໄຂດັ່ງລຸ່ມນີ້:

* ຖືກຈັດລະດັບຄວາມໜ້າເຊື່ອຖືແຕ່ A ຂຶ້ນໄປ;

* ມີຄວາມສາມາດດ້ານການເງິນໃນລະດັບ B ຂຶ້ນໄປ;

* ມີສຳນັກງານຕັ້ງຢູ່ສູນກາງການເງິນສາກົນ;

* ມີລະບົບເຄືອຄ່າຍ ການຊຳລະກວ້າງຂວາງທັງພາຍໃນແລະ ຕ່າງປະເທດ;

ຄ. ບັນດາສະຖາບັນການເງິນທີ່ເປັນຕົວແທນ ຊື້-ຂາຍພັນທະບັດຂອງລັດຖະບານຕ່າງປະເທດໃນຕະຫຼາດສາກົນ ທີ່ມີລະດັບຄວາມໜ້າເຊື່ອຖືຕາມມາດຖານດັ່ງທີ່ໄດ້ກຳນົດໄວ້ໃນຂໍ້ (ຂ) ຂ້າງເທິງ.

ມາດຕາ 7

ກົມບໍລິການ ທະນາຄານແຫ່ງ ສປປ ລາວ ເປີດບັນຊີໄວ້ນຳບັນດາທະນາຄານ ແລະ ສະຖາບັນການເງິນທີ່ເປັນຕົວແທນຕາມລາຍລະອຽດລຸ່ມນີ້:

ກ. ບັນຊີກະແສລາຍວັນ, ບັນຊີເງິນຝາກຂ້າມຄືນ ເອີ້ນລວມວ່າ: ເງິນຝາກບໍ່ມີກຳນົດ;

ຂ. ບັນຊີເງິນຝາກມີກຳນົດ;

ຄ. ບັນຊີຕິດຕາມການ ຊື້-ຂາຍ ພັນທະບັດຂອງລັດຖະບານຕ່າງປະເທດ: ບັນຊີນີ້ ໃຫ້ເປີດຢູ່ນຳແຕ່ທະນາຄານກາງຂອງບັນດາປະເທດ, ທີ່ເປັນເຈົ້າຂອງສະກຸນເງິນຕາໃນໂຄງປະກອບເງິນຕາຕ່າງປະເທດ ທີ່ທະນາຄານ ກາງ ເປັນຜູ້ຄຸ້ມຄອງ. ໃນກໍລະນີ ທະນາຄານກາງຂອງປະເທດ ດັ່ງກ່າວ ຫາກບໍ່ບໍລິການເປີດບັນຊີ ຕິດຕາມການຊື້-ຂາຍພັນທະບັດ ແມ່ນ ໃຫ້ເປີດບັນຊີເຫລົ່ານັ້ນ ນຳບັນດາທະນາຄານທຸລະກິດຂອງຕ່າງປະເທດ ທີ່ໄດ້ມາດຕະຖານຕາມທີ່ກຳນົດໄວ້ໃນຂໍ້ (ຂ) ຂອງມາດຕາ 6 ໃນ ກົດລະບຽບສະບັບນີ້.

ໝວດທີ III
ກຳນົດວົງເງິນລົງທຶນ

ມາດຕາ8:

ຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດເວລາ ແລະ ຂອບເຂດວົງເງິນລົງທຶນ ທີ່ຝາກໄວ້ນຳ ທະນາຄານ ແລະ ສະຖາບັນການເງິນທີ່ເປັນຕົວແທນ ຂອງຕົນໃນແຕ່ລະໄລຍະ ໂດຍອີງໃສ່ການສະເໜີຂອງກົມບໍລິການ.

ມາດຕາ 9:

ເພື່ອຮັບປະກັນ ຄວາມປອດໄພຂອງເງິນທຶນ ແລະ ຄວາມຄ່ອງຕົວໃນການຊຳລະ ທະນາຄານແຫ່ງ ສປປ ລາວ ລົງທຶນໃສ່ສະເພາະບັນດາເອກະສານການເງິນທີ່ສາມາດຊື້-ຂາຍໄດ້ທັນທີ, ເປັນຕົ້ນ ພັນທະບັດລັດຖະບານຂອງບັນດາປະເທດເຈົ້າຂອງສະກຸນເງິນຕາ ໃນໂຄງປະກອບເງິນຕາຕ່າງປະເທດ ທີ່ທະນາຄານແຫ່ງ ສປປ ລາວ ເປັນຜູ້ ຄຸ້ມຄອງ ຫຼື ພັນທະບັດຂອງ ບໍລິສັດ ທີ່ສາມາດແລກປ່ຽນໄດ້ຢ່າງເສລີ ແລະ ຈັດຢູ່ໃນລະດັບ AAA, ຊຶ່ງແມ່ນ ລັດຖະບານເປັນຜູ້ຄ້ຳປະກັນ.

ມາດຕາ10:

ເພື່ອຮັບປະກັນການຊຳລະກັບສາກົນ ແລະ ຕອບສະໜອງໄດ້ຄວາມຕ້ອງການໃຊ້ຈ່າຍເງິນຕາຕ່າງ ປະເທດ ຢູ່ພາຍໃນ ແລະ ຕ່າງປະເທດນັ້ນ, ທະນາຄານ ແຫ່ງ ສປປ ລາວ ຕ້ອງຮັກສາ ຍອດເງິນຕາຕ່າງປະ ເທດ ທີ່ມີຢູ່ນຳບັນດາບັນຊີ ເພື່ອການຊຳລະສະສາງ, ບັນຊີຝາກຂ້າມຄືນທີ່ບໍ່ມີກຳນົດ ຢູ່ນຳບັນດາທະນາ ຄານ ແລະ ສະຖາບັນການເງິນທີ່ເປັນຕົວແທນຢູ່ຕ່າງປະເທດ ຢ່າງໜ້ອຍໃຫ້ຢູ່ໃນລະດັບ 20% ແລະ ສູງສຸດ ບໍ່ເກີນ 50% ຂອງຍອດລວມເງິນຕາທັງໝົດທີ່ທະນາຄານແຫ່ງ ສປປ ລາວຄຸ້ມຄອງ. ສ່ວນທີ່ເຫລືອນັ້ນ ໃຫ້ ລົງທຶນເປັນເງິນຝາກມີກຳນົດ ແລະ ຊື້ພັນທະບັດ.

ໝວດທີ IV
ລະບຽບລາຍງານ, ການລົງບັນຊີ,
ການຕິດຕາມ ແລະ ກວດກາ.

ມາດຕາ 11:

ກົມບໍລິການ ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ດັ່ງນີ້:

+ ເປັນເຈົ້າການໃນການປະສານສົມທົບກັບກົມຄຸ້ມຄອງ, ກົມເງິນຕາຕ່າງປະເທດ ແລະ ກົມຄົ້ນ ຄວ້າໃນທຸກໆສາມເດືອນ ເພື່ອຕີລາຄາຄືນບັນດາທະນາຄານ ແລະ ສະຖາບັນການເງິນທີ່ເປັນ ຕົວແທນຂອງ ຕົນຢູ່ຕ່າງປະເທດ ໂດຍອີງໃສ່ການຕີລາຄາ ຂອງ ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື ທີ່ສາກົນຮັບຮູ້, ເພື່ອ ລາຍງານ ແລະ ຂໍຄຳອະນຸມັດຈາກຜູ້ວ່າການທະນາຄານແຫ່ງ ສປປ ລາວ ກ່ຽວກັບການປັບປຸງການພົວ ພັນກັບທະນາຄານ ແລະ ສະຖາບັນການເງິນທີ່ເປັນຕົວແທນ, ການກຳນົດວົງເງິນລົງທຶນໃຫ້ເໝາະສົມ ກັບການປ່ຽນແປງຂອງສະພາບໃນການຈັດລະດັບຄວາມໜ້າເຊື່ອຖື.

+ ບໍລິຫານເງິນທຶນທີ່ເປັນເງິນຝາກມີກຳນົດ, ຝາກບໍ່ມີກຳນົດ, ການຊື້-ຂາຍພັນທະບັດ, ການຊື້-ຂາຍ ເງິນຕາຕ່າງປະເທດ ແລະ ການລົງທຶນອື່ນໆ ນຳບັນດາທະນາຄານ ແລະ ສະຖາບັນການເງິນທີ່ເປັນຕົວແທນ ຕາມການຈັດລະດັບຄວາມໜ້າເຊື່ອຖື ຂອງແຕ່ລະທະນາຄານ ທີ່ຜູ້ວ່າການໄດ້ຮັບຮອງເອົາຕາມການຕີລາ ຄາຄືນໃໝ່.

+ ແຕ່ງຕັ້ງພະນັກງານຂອງກົມ ແລະ ອອກລະບຽບການຄຸ້ມຄອງການປະຕິບັດໜ້າທີ່ວຽກງານຂອງ ພະນັກງານໃນການ ຊື້-ຂາຍ ເງິນຕາ , ພັນທະບັດ ແລະ ການໝູນທຶນ.

+ ຮັບຜິດຊອບການໄລ່ລຽງ ບັນຊີລາຍຮັບ-ລາຍຈ່າຍທັງໝົດທີ່ເກີດຂຶ້ນໃນການຄຸ້ມຄອງ ບໍລິຫານ ເງິນທຶນ ຢູ່ຕ່າງປະເທດ ໂດຍອີງຕາມການແນະນຳຂອງກົມບັນຊີ-ການເງິນ ທະນາຄານແຫ່ງ ສປປ ລາວ, ສົມທຽບກັບໃບ ລອກກ່າຍບັນດາບັນຊີ ເງິນຝາກ, ບ້ວງເງິນລົງທຶນປະເພດຕ່າງໆ ຢູ່ຕ່າງປະເທດກັບບັນຊີຕິດ ຕາມໃນແຕ່ລະເດືອນ.

+ ໃນແຕ່ລະເດືອນຕ້ອງລາຍງານຢ່າງລະອຽດ ກ່ຽວກັບສະພາບການເຄື່ອນໄຫວທຸລະກິດເງິນ ຕາຕ່າງປະເທດ, ລາຍໄດ້ ຈາກການລົງທຶນ ແຕ່ລະປະເພດຢູ່ນຳທະນາຄານ ແລະ ສະຖາບັນການເງິນທີ່ເປັນ ຕົວແທນແຕ່ລະປະເທດ, ແຕ່ລະເຂດ ໃຫ້ ຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ແລະ ສຳເນົາໃຫ້ບັນດາ ກົມທີ່ກ່ຽວຂ້ອງ.

ມາດຕາ 12

ກົມເງິນຕາຕ່າງປະເທດ ມີໜ້າທີ່ສະໜອງຂໍ້ມູນກ່ຽວກັບແຜນການລາຍຮັບ-ລາຍຈ່າຍເງິນຕາຕ່າງປະເທດຂອງລັດ ໃຫ້ກົມບໍລິການ ທະນາຄານແຫ່ງ ສປປ ລາວ ເພື່ອຄວາມສະດວກ ແລະ ເປັນບ່ອນອີງໃຫ້ແກ່ການສ້າງແຜນທຸລະກິດເງິນຕາຕ່າງປະເທດຂອງຕົນ.

ມາດຕາ 13

ກົມຄົ້ນຄວ້າ ມີໜ້າທີ່ ແຈ້ງໃຫ້ ກົມບໍລິການ ທະນາຄານແຫ່ງ ສປປ ລາວ ຊາບຢ່າງທັນການກ່ຽວກັບແຜນການພິມຈຳໜ່າຍເງິນຕາພາຍໃນເພື່ອເກັບຊື້ເງິນຕາຕ່າງປະເທດເຂົ້າຄັງສຳຮອງ ໃນແຕ່ລະປີ.

ມາດຕາ14

ກົມກວດກາ ມີໜ້າທີ່ ຮັບຜິດຊອບວຽກງານກວດກາການປະຕິບັດບັນດາຂໍ້ຕົກລົງ, ຂໍ້ກຳນົດກົດລະບຽບກ່ຽວກັບການຄຸ້ມຄອງ - ບໍລະຫານເງິນຕາຕ່າງປະເທດ ທີ່ຜູ້ວ່າການທະນາຄານແຫ່ງ ສປປ ລາວ ປະກາດໃຊ້ໃນແຕ່ລະໄລຍະ .

ມາດຕາ 15

ກົມບັນຊີ-ການເງິນ ມີໜ້າທີ່ຮັບຜິດຊອບໂດຍກົງໃນການ ອອກຄຳແນະນຳ ກ່ຽວກັບລະບຽບການໄລ່ລຽງບັນຊີເງິນຕາຕ່າງປະເທດ.

ໝວດທີ V
ຂໍ້ກຳນົດສຸດທ້າຍ

ມາດຕາ16

ການເພີ້ມເຕີມ, ການດັດແກ້ ກົດລະບຽບສະບັບນີ້ ແມ່ນຜູ້ວ່າການທະນາຄານແຫ່ງ ສປປ ລາວເປັນຜູ້ຕົກລົງ.

ມາດຕາ 17

ກົດລະບຽບສະບັບນີ້ມີຜົນສັກສິດໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ: 28/12/2009

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສຸພັນ ມະໂຫລາດ